**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ເອກະສານ

# 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ

ກະຊວງສຶກສາທິການ ແລະ ກິລາ 2013

# ຄຳນຳ

ເພື່ອເປັນການຊຸກດັນການຈັດຕັ້ງປະຕິບັດຕາມແນວທາງຂອງການປະຕິຮູບການສຶກສາໄລຍະສອງໃຫ້ປະກົດຜົນເປັນຈິງມັນຈຳເປັນຕ້ອງໃຫ້ພາກສ່ວນຕ່າງໆເປັນເຈົ້າການໃນການຈັດຕັ້ງປະຕິບັດເປັນຂະບວນການ ແລະ ມີໝາກຜົນອອກມາຢ່າງເປັນຮູບປະທຳ, ໂດຍສະເພາະແມ່ນການຈັດຕັ້ງຊຶ່ງເປັນຫົວໜ່ວຍຮາກຖານຂອງການສຶກສາ ແລະ ກິລາ ນັ້ນແມ່ນໂຮງຮຽນ ແລະ ສະຖາບັນການສຶກສາ ແລະ ກິລາແຫ່ງຕ່າງໆເປັນໃຈກາງໃນການສ້າງຂະບວນການຕົວຈິງ.

ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ກຳນົດເນື້ອໃນຂໍ້ແຂ່ງຂັນ ສາມ ຂໍ້ອອກເພື່ອຈຸດປະສົງແນໃສ່ສ້າງສະຖາບັນການສຶກສາ ແລະ ໂຮງຮຽນໃຫ້ເປັນບ່ອນຖ່າຍທອດຄວາມຮູ້ວິທະຍາສາດດ້ານຕ່າງໆທີ່ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນເທື່ອລະກ້າວ, ສ້າງຄົນລາວໃຫ້ເປັນຄົນສີວິໄລ,ຮູ້ຮັກທຳມະຊາດ, ຮັກປະເທດຊາດ, ມີລະບຽບແບບແຜນຕາມທິດສັງຄົມນິຍົມ,ປາສະຈາກຄວາມມີອັກຄະຕິ ແລະ ສິ່ງຫຍໍ້ທໍ້ຕ່າງໆ, ມີສຸຂະພາບແຂງແຮງດີ.

ສາມຂໍ້ແຂ່ງຂັນທີ່ກຳນົດ: ສອນດີ-ຮຽນເກັ່ງ, ຕ້ານປະກົດການຫຍໍ້ທໍ້ ຕ່າງໆ ແລະ ສ້າງສະພາບແວດລ້ອມທີ່ດີນີ້ ມັນເປັນເນື້ອໃນພື້ນຖານເພື່ອເປັນບ່ອນອີງໃນການວາງແຜນພັດທະນາ, ການເລືອກບຸກຄົນ ແລະ ການຈັດຕັ້ງດີເດັ່ນໃນການປະຕິບັດວຽກງານແຕ່ລະສົກຮຽນເພື່ອໃຫ້ການຍ້ອງຍໍສັນລະເສີນຕາມຜົນງານແລະ ແກ້ໄຂ ຫຼື ກ່າວເຕືອນການຈັດຕັ້ງ ຫຼື ບຸກຄົນທີ່ກະທຳຜິດອີກດ້ວຍ.

ຫວັງວ່າ: ສາມຂໍ້ແຂ່ງຂັນທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດ

ອອກນີ້ຈະເປັນປະໂຫຍດສູງສິ່ງໃນທາງການປະຕິບັດແກ່ສັງຄົມເວົ້າລວມ, ໂດຍສະເພາະແມ່ນບັນດາໂຮງຮຽນ ແລະ ສະຖາບັນການສຶກສາ ແລະ ກິລາໃນທົ່ວປະເທດຈະນຳເອົາໄປເປັນບ່ອນອີງໃນການວາງແຜນພັດທະນາການຈັດຕັ້ງ ແລະ ບຸກຄະລາກອນຂອງຕົນໃຫ້ມີຜົນສຳເລັດໃນໜ້າທີ່ວຽກງານເປັນຢ່າງດີ.

ທີວໜ້າກົມຈັດຕັ້ງ ແລະ ພະນັກງານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------------------------

ກະຊວງສຶກສາທິການ ແລະ ກິລາ

ເລກທີ 131 /ສສກ.ຈຕ

ນະຄອນຫຼວງວຽງຈັນ, ວັນທີ 08 JAN 2013

## ຂໍ້ຕົກລົງຂອງລັດຖະມົນຕີ
## ວ່າດ້ວຍ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2013;
- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ ລົງ ວັນທີ 07 ກັນຍາ 2011;
- ອີງຕາມ ການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ**
**ຈຶ່ງຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ ເພື່ອສ້າງຂະບວນການແຂ່ງຂັນໃຫ້ມີບັນຍາກາດຟົດຟື້ນ, ເລືອກໄດ້ກົມກອງ ແລະ ບຸກຄົນດີເດັ່ນ ແລະ ເຮັດໃຫ້ການແຂ່ງຂັນຍ້ອງຍໍຖືກຕາມເປົ້າໝາຍ ແລະ ສອດຄ່ອງກັບຜົນງານຕົວຈິງ ເປັນການກະຕຸກຊຸກຍູ້ ແລະ ປູກຈິດສຳນຶກທີ່ດີໃຫ້ແກ່ຄົນຮຸ່ນສືບທອດ ແລະ ທົ່ວສັງຄົມດີຂຶ້ນພ້ອມທັງເຮັດໃຫ້ການສຶກສາມີຄຸນນະພາບດີຂຶ້ນເທົ່າທຽມພາກພື້ນ ແລະ ສາກົນ.

**ມາດຕາ 2 ເນື້ອໃນ 3 ຂໍ້ແຂ່ງຂັນ**

3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ ມີເນື້ອໃນດັ່ງນີ້:

1. ສອນດີ-ຮຽນເກັ່ງ
2. ຕ້ານປະກົດການຫຍໍ້ທໍ້
3. ສ້າງສິ່ງແວດລ້ອມທີ່ດີໃນໂຮງຮຽນ, ສູນ, ສະຖາບັນການສຶກສາ ແລະ ກິລາ

**ມາຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ໄດ້ ໃນໂຮງຮຽນ, ສູນ, ສະຖາບັນການສຶກສາ ແລະ ກິລາແຫ່ງຕ່າງໆທັງໃນ ແລະ ນອກໂຮງຮຽນທັງພາກລັດ ແລະ ເອກະຊົນ.

ໂຮງຮຽນ ແລະ ສະຖາບັນການສຶກສາ ແລະ ກິລາ

ທີ່ຂຶ້ນກັບຂະແໜງການອື່ນ ກໍສາມາດນຳເອົາ 3 ຂໍ້ແຂ່ງຂັນນີ້ໄປຈັດຕັ້ງປະຕິບັບໄດ້.

## ໝວດທີ 2
## ການຈັດຕັ້ງການແຂ່ງຂັນ ແລະ ການຍ້ອງຍໍ

### ມາດຕາ 4 ການຈັດຕັ້ງການແຂ່ງຂັນ

ການເປີດບັ້ນແຂ່ງຂັນ 3 ຂໍ້ແຂ່ງຂັນໃນແຕ່ລະໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາ ແຫ່ງຕ່າງໆຂອງຂະແໜງການສຶກສາ ແລະ ກິລາ ໃຫ້ຖືເອົາມື້ເປີດສົກຮຽນໃໝ່ຂອງແຕ່ລະປີເປັນການເປີດບັ້ນຂໍ້ແຂ່ງຂັນ.

ການສະຫຼຸບບັ້ນແຂ່ງຂັນໃຫ້ປະຕິບັດທ້າຍສົກຮຽນ ຂອງແຕ່ລະປີໂດຍອີງຕາມຜົນຂອງການປະເມີນນັ້ນ, ໃຫ້ມີການຄັດເລືອກຜູ້ທີ່ມີຜົນງານດີເດັ່ນໃນບັ້ນແຂ່ງຂັນເພື່ອນຳສະເໜີການຍ້ອງຍໍຕາມຄວາມເໝາະສົມ.

ຈັດພິທີສະຫຼຸບມອບຮັບ ແລະ ປະກາດຜົນບັ້ນແຂ່ງຂັນໃນໂອກາດປິດປີຮຽນ ຂອງແຕ່ລະປີພ້ອມທັງຍ້ອງຍໍກົມກອງ ແລະ ບຸກຄົນດີເດັ່ນ.

### ມາດຕາ 6 ການຍ້ອງຍໍກົມກອງລວມໝູ່

ການຈັດຕັ້ງການປະຕິບັດ ການຍ້ອງຍໍ ສຳລັບກົມກອງລວມໝູ່ມີດັ່ງນີ້:

1. ຜົນການປະເມີນໄດ້ຄະແນນສະເລ່ຍດີເລີດ 9.00-10 ຈະໄດ້ຮັບທຸງໄຊ ຂອງກະຊວງສຶກສາທິການ ແລະ ກິລາ;

2. ຜົນການປະເມີນໄດ້ຄະແນນສະເລ່ຍດີ 8.00-8.99 ຈະໄດ້ຮັບໃບຍ້ອງຍໍ ຈາກລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ;

3. ການປະເມີນໄດ້ຄະແນນສະເລ່ຍ 7.00-7.99 ຈະໄດ້ຮັບໃບຍ້ອງຍໍຈາກຂັ້ນທ້ອງຖິ່ນ.

**ມາດຕາ 7 ການຍ້ອງຍໍບຸກຄົນ**

ການຈັດຕັ້ງການປະຕິບັດການຍ້ອງຍໍສໍາລັບບຸກຄົນ ມີດັ່ງນີ້:

1. ຜົນການປະເມີນໄດ້ຄະແນນສະເລ່ຍດີເລີດ 9.00-10 ຈະໄດ້ຮັບການຍ້ອງຍໍຂັ້ນລັດຖະບານ;

2. ຜົນການປະເມີນໄດ້ຄະແນນສະເລ່ຍດີ 8.00-8.99 ຈະໄດ້ຮັບການຍ້ອງຍໍ ຈາກລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ;

3. ຜົນການປະເມີນໄດ້ຄະແນນສະເລ່ຍ 7.00-7.99 ຈະໄດ້ຮັບໃບຍ້ອງຍໍ ຈາກຂັ້ນທ້ອງຖິ່ນ.

ນອກຈາກນັ້ນ, ຜູ້ທີ່ມີຜົນງານດີເດັ່ນໃນການຄົ້ນຄວ້າວິໄຈກ່ຽວກັບການຮຽນ-ການສອນໃນລະດັບຊາດຈະພິຈາລະນາຍ້ອງຍໍປະເພດຫຼຽນໄຊແຮງງານ.

## ໝວດທີ 3
## ຄະນະກໍາມະການຮັບຜິດຊອບການແຂ່ງຂັນ

**ມາດຕາ 8 ຄະນະກໍາມາການຮັບຜິດຊອບການແຂ່ງຂັນ 3 ຂໍ້ແຂ່ງຂັນແຕ່ລະຂັ້ນ**

ການແຂງຂັນຕັ້ງແຕ່ຄະນະກໍາມາການຮັບຜິດຊອບການແຂ່ງຂັນຂອງແຕ່ລະຂັ້ນປະກອບມີ:

**8.1 ຄະນະກໍາມາການຂັ້ນກະຊວງປະກອບມີ**:

1) ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ ເປັນປະທານ

2) ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຮອງປະທານ

3) ຫົວໜ້າກົມກວດກາ ເປັນກໍາມະການ

4) ຫົວໜ້າກົມອະນຸບານ ແລະ ປະຖົມສຶກສາ ເປັນກໍາມະການ

5) ຫົວໜ້າກົມມັດທະຍົມສຶກສາ ເປັນກໍາມະການ

6) ຫົວໜ້າກົມອາຊີວະສຶກສາ ເປັນກໍາມະການ

7) ຫົວໜ້າກົມການສຶກສາຊັ້ນສູງ ເປັນກຳມະການ

8) ຫົວໜ້າກົມພາລະ ແລະ ສິລະປະສຶກສາ ເປັນກຳມະການ

9) ຫົວໜ້າກົມສ້າງຄູ ເປັນກຳມະການ

10) ຫົວໜ້າກົມການສຶກສານອກໂຮງຮຽນ ເປັນກຳມະການ

11) ຫົວໜ້າພະແນກນະໂຍບາຍ ແລະ ຍ້ອງຍໍ ເປັນເລຂານຸການ

**8.2 ຄະນະກຳມະການຂັ້ນແຂວງ, ນະຄອນຫຼວງ ປະກອບມີ**:

1) ຮອງເຈົ້າແຂວງ ທີ່ຊີ້ນຳວຽກງານສຶກສາ ແລະ ກິລາ ເປັນປະທານ

2) ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເປັນຮອງປະທານ

3) ບັນດາຫົວໜ້າຂະແໜງຈັດຕັ້ງ ແລະ ພະນັກງານ, ກ່ອນໄວຮຽນ- ປະຖົມສຶກສາ, ມັດທະຍົມສຶກສາ, ອາຊີວະສຶກສາ, ພັດທະນາຄູ, ກວດກາ,ນອກໂຮງຮຽນ-ອົບຮົມວິຊາຊີຂັ້ນພື້ນຖານ ແລະ ພາລະ ແລະ ສິລະປະສຶກສາ ເປັນກຳມະການ

4) ພະນັກງານຂະແໜງຈັດຕັ້ງ ແລະ ພະນັກງານ ເປັນເລຂານຸການ

**8.3 ຄະນະກຳມະການຂັ້ນເມືອງ, ເທດສະບານ ປະກອບມີ**:

1) ຮອງເຈົ້າເມືອງ ທີ່ຊີ້ນຳວຽກງານສຶກສາ ແລະ ກິລາ ເປັນປະທານ

2) ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານເປັນຮອງປະທານ

3)ບັນດາຫົວໜ້າໜ່ວຍງານການສຶກສາກ່ອນໄວຮຽນ,ການສຶກສານອກໂຮງຮຽນ, ກວດກາ, ພັດທະນາຄູ, ພະລະ ແລະ ສິລະປະສຶກສາເປັນກຳມະການ

4) ພະນັກງານໜ່ວຍງານຈັດຕັ້ງ ແລະ ພະນັກງານ ເປັນເລຂານຸການ

**8.4 ຄະນະກຳມະການຂັ້ນໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາແຫ່ງຕ່າງໆ ປະກອບມີ:**

| | |
|---|---|
| 1) ຜູ້ອຳນວຍການ | ເປັນປະທານ |
| 2) ຮອງຜູ້ອຳນວຍການ | ເປັນຮອງປະທານ |
| 3) ຫົວໜ້າຫ້ອງການ/ໜ່ວຍງານ ຈຳນວນໜຶ່ງ | ເປັນກຳມະການ |
| 4) ຕົວແທນຈາກອົງການຈັດຕັ້ງມະຫາຊົນ | ເປັນກຳມະການ |
| 5) ຄະນະພັດທະນາການສຶກສາ | ເປັນກຳມະການ |
| 6) ສະມາຄົມພໍ່ແມ່ນັກຮຽນ | ເປັນກຳມະການ |

**ມາດຕາ 9. ໜ້າທີ່ ແລະ ສິດ ຂອງຄະນະກຳມະການ 3 ຂໍ້ແຂ່ງຂັນ**

**9.1 ໜ້າທີ່ ແລະ ສິດ ຂອງຄະນະກຳມະການ ຂັ້ນກະຊວງ, ແຂວງ ແລະ ເມືອງ ມີດັ່ງນີ້:**

1) ສ້າງ ແລະ ປັບປຸງ ບັນດານິຕິກຳຕ່າງໆ ກ່ຽວກັບການຄຸ້ມຄອງວຽກງານ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ.
2) ສ້າງແຜນ ແລ ະກິດຈະກຳລະອຽດ ໃນການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນ ໃນແຕ່ລະໄລຍະ.
3) ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນ ຂອງແຕ່ລະຂັ້ນ.
4) ກວດກາຕີລາຄາ ແລະ ຕັດສິນຜົນການແຂ່ງຂັນ 3 ຂໍ້ແຂ່ງຂັນ. ພ້ອມທັງຍ້ອງຍໍແກ່ກົມກອງ ຫຼື ບຸກຄົນດີເດັ່ນ.
5) ສະຫຼຸບ, ລາຍງານ ແລະ ຖອດຖອນບົດຮຽນ ກ່ຽວກັບການແຂ່ງຂັນໃນແຕ່ລະປີ.

**9.2 ໜ້າທີ່ ແລະ ສິດຂອງຄະນະກຳມະການຂັ້ນໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາແຫ່ງຕ່າງໆ ມີດັ່ງນີ້:**

1) ແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຈັດຕັ້ງປະຕິບັດວຽກງານ 3 ຂໍ້ແຂ່ງຂັນ ໃນແຕ່ລະໄລຍະໃຫ້ໄດ້ຮັບໝາກຜົນ.
2) ສ້າງແຜນການ ງົບປະມານ ແລະ ກິດຈະກຳລະອຽດໃນ ແຕ່ລະປີ ເພື່ອສະເໜີຂັ້ນເທິງຂອງຕົນຮັບຮອງ.
3) ຈັດຕັ້ງການເຜີຍແຜ່ບັ້ນແຂ່ງຂັນໃຫ້ຜູ້ປົກຄອງນັກຮຽນ, ຄະນະພັດທະນາການສຶກສາຂັ້ນຂອງຕົນ ແລະ ຊຸມຊົນຮັບຊາບເພື່ອໃຫ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ.
4) ເປີດບັ້ນແຂ່ງຂັນຕາມທີ່ໄດ້ລະບຸໄວ້ໃນມາດຕາ 4.
5) ຄັດເລືອກເອົາກົມກອງ ແລະ ບຸກຄົນ ດີເດັ່ນ ໃນພາກສ່ວນທີ່ຂຶ້ນກັບຕົນເອງ.
6) ກວດກາປະເມີນຜົນບັ້ນແຂ່ງຂັນໃຫ້ປະຕິບັດໃນທ້າຍສົກຮຽນ ຕາມແບບຟອມທີ່ ກະຊວງສຶກສາທິການ ແລະ ກິລາ ກຳນົດອອກ.
7) ລາຍງານ ແລະ ສະຫຼຸບບຸກຄົນ ແລະ ກົມກອງດີເດັ່ນ ໃນການຈັດຕັ້ງທີ່ຕົນຂຶ້ນກັບຮັບຊາບ.
8) ສະຫຼຸບບັ້ນແຂ່ງຂັນຕາມທີ່ໄດ້ລະບຸໄວ້ໃນມາດຕາ 4.
9) ສະຫຼຸບ, ລາຍງານ ແລະ ຖອດຖອນບົດຮຽນກ່ຽວກັບການແຂ່ງຂັນໃນແຕ່ລະປີ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 10. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ອອກບົດແນະນໍາ ເພື່ອຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນ ໃນຂອບເຂດທົ່ວປະເທດໃຫ້ໄດ້ຮັບຜົນດີ.

**ມາດຕາ 11. ການຜັນຂະຫຍາຍ**

ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາແຫ່ງຕ່າງໆ ສ້າງແຜນການ ແລະ ກິດຈະກໍາລະອຽດ ໃນການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນໃຫ້ໄດ້ຮັບຜົນດີ

**ມາດຕາ 12. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ຕົກລົງ ແລະ ເອກະສານຕ່າງໆ ຊຶ່ງປະກາດໃຊ້ໃນເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກລົບລ້າງ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ**

ດຣ.ພັນຄໍາ ວິພາວັນ

ບ່ອນສົ່ງ:

1. ກະຊວງພາຍໃນ 1 ສະບັບ
2. ຫ້ອງການກະຊວງ 1 ສະບັບ
3. ບັນດາກົມ ແລະ ສະຖາບັນ ພາກສ່ວນລະ 1 ສະບັບ
4. ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ-ແຂວງໆລະ 1 ສະບັບ
5. ພາກສ່ວນກ່ຽວຂ້ອງ 1 ສະບັບ
6. ເກັບມ້ຽນ 3 ສະບັບ

## ແບບຟອມປະເມີນ 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະກິລາ (ແບບຟອມທີ 1)

ຊື່ໂຮງຮຽນ/ສູນ/ສະຖາບັນ......................ເມືອງ........................ແຂວງ....................ປະຈຳປີ.................

| ລ/ດ | ຊື່ແລະນາມສະກຸນ | ສອນດີ-ຮຽນເກັ່ງ | | | | | | | | | | | | | | | | | | | | | | | | | | ລວມ | ສະເລ່ຍ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ສອນດີ-ສອນເກັ່ງ | | | | | | | | | | | | | | | | ຮຽນດີ-ຮຽນເກັ່ງ | | | | | | | | | | | | |
| | | ຄຸນລັກສະນະຂອງຄູ | | | | | ການກຽມພ້ອມກ່ອນຂຶ້ນຫ້ອງ | | | ການສິດສອນ | | | | | | | | | ຄຸນສົມບັດຂອງນັກຮຽນ | | | ການຄົ້ນຄວ້າຮໍ່າຮຽນ | | | | | ຜົນການຮຽນຂອງນັກຮຽນ | | | |
| | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | 14 | 15 | 16 | 17 | 18 | 19 | 20 | 21 | 22 | 23 | 24 | 25 | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | | | | | | | |

ໝາຍເຫດ: ກ່ອນໃຫ້ຄະແນນ ໃຫ້ອ່ານເນື້ອໃນ ແລະ ຕົວຊີ້ວັດຂອງ 3 ຂໍ້ແຂ່ງຂັນກ່ຽວກັບສອນດີ-ຮຽນເກັ່ງໃນບົດແນະນຳຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ.................ລົງວັນທີ............................ໃຫ້ລະອຽດ

1. ລະດັບການໃຫ້ຄະແນນ
1. ປະເພດ 1 ຄະແນນແຕ່ 9-10
2. ປະເພດ 2 ຄະແນນແຕ່ 8.00-8.99
3. ປະເພດ 3 ຄະແຮນນແຕ່ 7.00-7.99

2. ຄວາມໝາຍຂອງຄະແນນສະເລ່ຍ
- ຄະແນນສະເລ່ຍແຕ່ 9.00-10 ໝາຍຄວາມວ່າດີຫຼາຍ
- ຄະແນນສະເລ່ຍແຕ່ 8.00-8.99 ໝາຍຄວາມວ່າດີ
- ຄະແນນສະເລ່ຍ 7.00-7.99 ໝາຍຄວາມວ່າປານກາງ

แบบฟอมประเมิน 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ (ແບບທີ 2)

ຊື່ໂຮງຮຽນ/ສູນ/ສະຖາບັນ.........................ເມືອງ.................ແຂວງ......................ປະຈຳສົກປີ.............................

| ລ/ດ | ຊື່ແລະນາມສະກຸນ | ຕ້ານປະກົດການຫຍໍ້ທໍ້ໃນໂຮງຮຽນ, ສູນ ແລະ ສະຖາບັນສຶກສາ | | | | | | | | | | | | | | | | | | | | | | ລວມ | ສະເລ່ຍ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ດ້ານນິຕິກຳ | | | | | | ກຽນສະກັດກັ້ນແລະຕ້ານການຄ້າຂາຍສິ່ງເສບຕິດ | | | | | | ການສະກັດກັ້ນຄວາມບໍ່ໂປ່ງໃສ | | | | | | | | | | | | |
| | | | | | | | | | | | | | | ດ້ານການຮຽນການສອນ | | | ຕ້ານຄວາມໂປ່ງໃສໃນການສອບເສັງ | | | ຕ້ານຄວາມບໍ່ໂປ່ງໃສໃນການປອມແປງເອກະສານ | | | | | | |
| | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | 14 | 15 | 16 | 17 | 18 | 19 | 20 | 21 | 22 | | | |
| 1 | | | | | | | | | | | | | | | | | | | | | | | | | | |
| 2 | | | | | | | | | | | | | | | | | | | | | | | | | | |
| 3 | | | | | | | | | | | | | | | | | | | | | | | | | | |
| 4 | | | | | | | | | | | | | | | | | | | | | | | | | | |
| 5 | | | | | | | | | | | | | | | | | | | | | | | | | | |
| 6 | | | | | | | | | | | | | | | | | | | | | | | | | | |
| 7 | | | | | | | | | | | | | | | | | | | | | | | | | | |
| 8 | | | | | | | | | | | | | | | | | | | | | | | | | | |
| 9 | | | | | | | | | | | | | | | | | | | | | | | | | | |
| 10 | | | | | | | | | | | | | | | | | | | | | | | | | | |
| 11 | | | | | | | | | | | | | | | | | | | | | | | | | | |
| 12 | | | | | | | | | | | | | | | | | | | | | | | | | | |
| 13 | | | | | | | | | | | | | | | | | | | | | | | | | | |

ໝາຍເຫດ: ກ່ອນການໃຫ້ຄະແນນໃຫ້ອ່ານເນື້ອໃນ ແລະ ຕົວຊີ້ວັດຂອງ 3 ຂໍ້ແຂ່ງຂັນ ກ່ຽວກັບ ຕ້ານປະກົດການຫຍໍ້ທໍ້ໃນບົດແນະນຳຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 131 ລົງວັນທີ 08/01/2013 ໃຫ້ລະອຽດ

แบบฟอมปะเมีน 3 ຂໍ້ແຂ່ງຂັນ ຂອງຂະແໜງການສຶກສາ ແລະ ກິລາ (ແບບຟອມທີ 3)

ຊື່ໂຮງຮຽນ/ສູນ/ສະຖາບັນ.........................ເມືອງ.................ແຂວງ......................ປະຈຳສົກປີ.............................

| ລ/ດ | ຊື່ແລະນາມສະກຸນ | ສ້າງສະພາບແວດລ້ອມທີ່ດີໃນໂຮງຮຽນ, ສູນ ແລະ ສະຖາບັນສຶກສາ | | | | | | | | | | | | | ລວມ | ສະເລ່ຍ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ອຳນວຍຄວາມສະດວກໃຫ້ແກ່ການຮຽນການສອນ | | | | ເຮັດໃຫ້ໂຮງຮຽນ,ສູນ ແລະ ສະຖາບັນການສຶກສາມີຄວາມສະອາດ | | | ເຮັດໃຫ້ໂຮງຮຽນ,ສູນ ແລະ ສະຖາບັນການສຶກສາມີຄວາມສວຍງາມ | | | ເຮັດໃຫ້ໂຮງຮຽນ,ສູນ ແລະ ສະຖາບັນການສຶກສາເປັນສີຂຽວ | | | | | |
| | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | 13 | | | |
| 1 | | | | | | | | | | | | | | | | | |
| 2 | | | | | | | | | | | | | | | | | |
| 3 | | | | | | | | | | | | | | | | | |
| 4 | | | | | | | | | | | | | | | | | |
| 5 | | | | | | | | | | | | | | | | | |
| 6 | | | | | | | | | | | | | | | | | |
| 7 | | | | | | | | | | | | | | | | | |
| 8 | | | | | | | | | | | | | | | | | |
| 9 | | | | | | | | | | | | | | | | | |
| 10 | | | | | | | | | | | | | | | | | |
| 11 | | | | | | | | | | | | | | | | | |
| 12 | | | | | | | | | | | | | | | | | |
| 13 | | | | | | | | | | | | | | | | | |

ໝາຍເຫດ: ກ່ອນການໃຫ້ຄະແນນໃຫ້ອ່ານເນື້ອໃນ ແລະ ຕົວຊີ້ວັດຂອງ 3 ຂໍ້ແຂ່ງຂັນ ກ່ຽວກັບ ສ້າງສະພາບແວດລ້ອມທີ່ດີໃນໂຮງຮຽນ, ສູນ ແລະ ສະຖາບັນການສຶກສາໃນປຶ້ມແນະນຳຖະແນງຕົວການກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 137 ລົງວັນທີ 08/01/2013ໃຫ້ລະອຽດ

แบบฟอมปะเมิน 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ (ແບບທີ 4)

ຊື່ໂຮງຮຽນ/ສູນ/ສະຖາບັນ.........................ເມືອງ.................ແຂວງ......................ປະຈຳສົກປີ.............................

| ລ/ດ | ຊື່ແລະນາມສະກຸນ | ຄະແນນສະເລ່ຍ ດ້ານສອນດີ-ຮຽນເກັ່ງ | ຄະແນນສະເລ່ຍດ້ານ ຕ້ານປະກົດການຫຍໍ້ທໍ້ | ຄະແນນສະເລ່ຍ ດ້ານສ້າງສະພາບ ແວດລ້ອມທີ່ດີ | ລວມ | ສະເລ່ຍ | ໝາຍເຫດ |
|---|---|---|---|---|---|---|---|
| 1 | | | | | | | ການຍ້ອງຍໍບຸກຄົນໃຫ້ອີງຕາມຄະແນນສະເລ່ຍທັງ 3 ດ້ານຂອງແຕ່ລະຄົນ |
| 2 | | | | | | | |
| 3 | | | | | | | |
| 4 | | | | | | | |
| 5 | | | | | | | |
| 6 | | | | | | | |
| 7 | | | | | | | |
| 8 | | | | | | | |
| 9 | | | | | | | |
| 10 | | | | | | | |
| 11 | | | | | | | |
| 12 | | | | | | | |
| 13 | | | | | | | |
| ລວມຄະແນນສະເລ່ຍທັງໝົດຂອງໂຮງຮຽນ, ສູນ ຫຼື ສະຖາບັນການສຶກສາ | | | | | | | ການຍ້ອງຍໍກົມກອງໃຫ້ອີງຕາມຄະແນນສະເລ່ຍທັງໝົດ |

ໝາຍເຫດ: ໃຫ້ສັງລວມ ແລະ ຄິດໄລ່ຄະແນນສະເລ່ຍທັງ 3 ດ້ານ ຂອງແຕ່ລະຄົນ ແລະ ຄະແນນສະເລ່ຍທັງໝົດຂອງໂຮງຮຽນ, ສູນ ຫຼືສະຖາບັນການສຶກສາ

- ໃສ່ຜົນການປະເມີນໃຫ້ຄັດເລືອກບຸກຄົນ ແລະ ກົມກອງດີເດັ່ນຕາມມາດຕາ 6 ການຍ້ອງຍໍກົມກອງລວມໝູ່ ແລະ ມາດຕາ 7 ການຍ້ອງຍໍບຸກຄົນ ໃນຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍ 3 ຂໍ້ແຂ່ງຂັນ ສະບັບເລກທີ 137 ລົງວັນທີ 8 ມັງກອນ 2013

ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------------------

ສຶກສາ-ກິລາ

ກະຊວງສຶກສາທິການ ແລະ ກິລາ ເລກທີ 37 /ສສກ.ຈຕ

ກົມຈັດຕັ້ງ ແລະ ພະນັກງານ ນະຄອນຫຼວງວຽງຈັນ, ວັນທີ 08 JAN 2013

# ບົດແນະນຳ

ເຖິງ: ທ່ານຫົວໜ້າຫ້ອງການກະຊວງ, ຫົວໜ້າກົມ ແລະ ອົງການເທົ່າກົມ
ທ່ານອະທິການບໍດີ ມະຫາວິທະຍາໄລແຫ່ງຕ່າງໆ
ທ່ານຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ,ນະຄອນຫຼວງ
ຜູ້ອຳນວຍການສະຖາບັນ, ສູນ ແລະ ໂຮງຮຽນແຫ່ງຕ່າງໆ

ເລື່ອງ: ການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນ ສອນດີຮຽນເກັ່ງ, ຕ້ານປະກົດ
ການຫຍໍ້ທໍ້ ແລະ ສ້າງສິ່ງແວດລ້ອມທີ່ດີໃນໂຮງຮຽນ, ສູນ ແລະ ສະ
ຖາບັນການສຶກສາ ແລະ ກິລາ

**- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ ສະບັບເລກທີ 131/ສສກ.ຈຕ, ລົງວັນທີ 8 ມັງກອນ 2013.**

ໃນໄລຍະຜ່ານມາວຽກງານການແຂ່ງຂັນຍ້ອງຍໍ ຂອງຂະແໜງການສຶກ

ສາ ແລະ ກິລາ ຢູ່ໃນໂຮງຮຽນ, ສູນ ສະຖາບັນການສຶກສາ ແລະ ກິລາຂັ້ນຕ່າງໆ ຕະຫຼອດຮອດ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ, ໄດ້ມີຂະບວນການທີ່ຟົດຟື້ນດີພໍສົມຄວນ, ສະແດງອອກໃນແຕ່ລະປີມີ ກົມກອງ ແລະ ບຸກຄົນດີເດັ່ນ ທີ່ໄດ້ຮັບການຍ້ອງຍໍປະເພດທຸງໄຊ,ຫຼຽນໄຊ,ຫຼຽນກາ ແລະ ໃບຍ້ອງຍໍລະດັບຕ່າງໆ ເປັນຈຳນວນຫຼວງຫຼາຍ; ແຕ່ສັງເກດເຫັນວ່າການຈັດຕັ້ງປະຕິບັດການແຂ່ງຂັນຍ້ອງຍໍດັ່ງກ່າວ ຍັງບໍ່ທັນເປັນຂະບວນ ການຢ່າງປົກກະຕິ ແລະ ຕໍ່ເນື່ອງ, ອີກດ້ານໜຶ່ງເນື້ອໃນມາດຕະຖານໃນການແຂ່ງຂັນ, ການເຄື່ອນໄຫວສ້າງຂະບວນ ການ ແລະ ການຄັດເລືອກຍັງບໍ່ທັນເລິກເຊິ່ງ ແລະ ເປັນເອກະພາບກັນ.ເພື່ອຕອບສະໜອງໃຫ້ແກ່ຂະບວນການແຂ່ງຂັນຍ້ອງຍໍໃຫ້ຖືກຕາມເປົ້າໝາຍ ແລະ ສອດຄ່ອງກັບຜົນງານ ຕົວຈິງທັງເປັນການກະຕຸກຊຸກຍູ້ປູກຈິດສຳນຶກທີ່ດີໃຫ້ແກ່ຄົນຮຸ່ນສືບທອດ ແລະ ທົ່ວສັງຄົມດີຂື້ນ.

## ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ຈຶ່ງອອກບົດແນະນຳ :

### I. ຈຸດປະສົງ

ຈຸດປະສົງ ຂອງການຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນໃນໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາ ເພື່ອ:

1. ສ້າງຂະບວນການແຂ່ງຂັນໃຫ້ເຂົ້າສູ່ຊີວິດຕົວຈິງຂອງແຕ່ລະໂຮງຮຽນ, ສູນ, ສະຖາບັນການສຶກສາ ແລະ ກິລາຂັ້ນຕ່າງໆ;
2. ປັບປຸງການຮຽນການສອນ ໃຫ້ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ;
3. ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆ ໃນໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາ;
4. ສ້າງສະພາບແວດລ້ອມທີ່ດີ ເພື່ອອຳນວຍຄວາມສະດວກໃຫ້ແກ່ ການຮຽນ-ການສອນ ແລະ ປູກຈິດສຳນຶກທີ່ດີໃຫ້ແກ່ຄູ ອາຈານ ແລະ ຜູ້ຮຽນ;
5. ສ້າງເງື່ອນໄຂໃຫ້ໂຮງຮຽນ, ສູນ, ສະຖາບັນການສຶກສາ ແລະ ກິລາ ກ້າວສູ່ມາດຕະຖານຄຸນນະພາບພ້ອມທັງຄັດເລືອກ ໄດ້ບຸກຄົນ ແລະ ກົມກອງດີເດັ່ນ.

## II. ເນື້ອໃນ ແລະ ຕົວຊີ້ບອກ ຂອງ 3 ຂໍ້ແຂ່ງຂັນ

### 1. ສອນດີຮຽນເກັ່ງ

### ກ. ສອນດີສອນເກັ່ງ ສະແດງອອກດ້ານຕ່າງໆ ດັ່ງນີ້:

1) ຄຸນລັກສະນະຂອງຄູ;

1.1 ມີແນວຄິດການເມືອງໜັກແໜ້ນ, ຮັກອາຊີບຄູ ແລະ ມີແບບແຜນວິທີເຮັດວຽກ;

1.2 ສາມັກຄີພາຍໃນຢ່າງແໜ້ນແຟ້ນ ແລະ ພາຍນອກ ຢ່າງກວ້າງຂວາງ;

1.3 ຫ້າວຫັນປະຕິບັດໜ້າທີ່ວິຊາສະເພາະ ແລະ ຕັ້ງໜ້າຄົ້ນຄ້ວາວິໄຈພາກປະຕິບັດ ກ່ຽວກັບການຮຽນ-ການສອນ ;

1.4 ມີການພັດທະນາ ແລະ ຍົກລະດັບຕົນເອງໃນດ້ານຕ່າງໆ ຢ່າງຕໍ່ເນື່ອງ;

1.5 ມີວຸດທິການສຶກສາ, ວິຊາຄູ ແລະ ມີຄວາມສາມາດສິດສອນໃນວິຊາສອນຂອງຕົນ

**2) ການກຽມຄວາມພ້ອມຂອງຄູກ່ອນຂຶ້ນຫ້ອງສອນ;**

2.1 ມີແຜນການສອນປະຈຳພາກຮຽນ, ປີຮຽນ ແລະ ແຕ່ງບົດສອນຄົບຖ້ວນກ່ອນຂຶ້ນຫ້ອງສອນ;

2.2 ສ້າງອຸປະກອນກະກຽມສື່ການຮຽນ-ການສອນ ແລະ ການທົດລອງ ເພື່ອຮັບໃຊ້ໃນການສອນ;

2.3 ປຶ້ມຕິດຕາມ, ປຶ້ມຮຽກຊື່ ແລະ ໃຫ້ຄະແນນນັກຮຽນ.

**3) ການສິດສອນຂອງຄູ.**

3.1 ປະຕິບັດໂມງເວລາສິດສອນຢ່າງເຂັ້ມງວດ;

3.2 ນຳໃຊ້ບາດກ້າວ, ຫຼັກການ ແລະ ວິທີສິດສອນຢ່າງຖືກຕ້ອງ;

3.3 ການຖາມ, ການຕອບນັກຮຽນມີລັກສະນະສ້າງສັນ ແລະ ໃຫ້ກຳລັງໃຈ;

3.4 ນຳໃຊ້ອຸປະກອນ ແລະ ສື່ການສອນໃຫ້ເໝາະສົມກັບກິດຈະກຳການສອນ;

3.5 ນຳພານັກຮຽນເຮັດພາກປະຕິບັດຕົວຈິງ, ທົດລອງ, ການນຳໃຊ້ຫ້ອງອ່ານ ຫ້ອງສະໝຸດ ແລະ ກິດຈະກຳອື່ນໆທີ່ພົວພັນກັບການຮຽນການສອນ ແລະ ຮັບປະກັນຄວາມປອດໄພ;

3.6 ກວດກາປະເມີນຜົນການຮຽນຂອງນັກຮຽນປະຈຳເດືອນ, ພາກຮຽນເປັນປົກກະຕິ;

3.7 ໃຫ້ວຽກບ້ານ, ບົດຝຶກຫັດ ແລະ ນຳພາແກ້ບົດຝຶກຫັດ ເປັນປົກກະຕິ;

3.8 ການຮຽນ, ການສອນຄົບຕາມຫຼັກສູດໂຄງການສອນແຕ່ລະຊັ້ນຮຽນ

3.9 ຈັດການຊ່ວຍເຫຼືອນັກຮຽນອ່ອນດ້ວຍຫຼາຍຮູບການ.

**ຂ. ຮຽນດີຮຽນເກັ່ງ ສະແດງອອກດ້ານຕ່າງໆ ດັ່ງນີ້:**

**1) ຄຸນສົມບັດຂອງນັກຮຽນ**

1.1 ປະຕິບັດລະບຽບຂອງໂຮງຮຽນ, ສະຖາບັນການສຶກສາ ແລະ ກົດໝາຍບ້ານເມືອງ ຢ່າງເຂັ້ມງວດ;

1.2 ການປະເມີນຄຸນສົມບັດຂອງນັກຮຽນຕ້ອງໄດ້ຄະແນນ 8 ຂຶ້ນໄປ;

1.3 ມີຄວາມສາມັກຄີຊ່ວຍເຫຼືອໝູ່ເພື່ອນ, ເຄົາລົບນັບຖືຄູ ແລະ ຜູ້ອາວຸໂສ.

**2) ການຄົ້ນຄວ້າຮໍ່າຮຽນ ແລະ ການເຄື່ອນໄຫວກິດຈະກຳ**

2.1 ຕັ້ງໜ້າຄົ້ນຄວ້າຮໍ່າຮຽນ ແລະ ຟັງຄູອະທິບາຍ;

2.2 ມີຄວາມກ້າຫານຖາມ-ຕອບ ແລະ ສົນທະນາກັບຄູ;

2.3 ມາໂຮງຮຽນໃຫ້ທັນເວລາ ແລະ ບໍ່ຂາດໂຮງຮຽນໂດຍບໍ່ມີເຫດຜົນ;

2.4 ການແກ້ວຽກບ້ານ, ບົດຝຶກຫັດ ແລະ ສິ່ງບົດລາຍງານ ໃຫ້ຄູຢ່າງຖືກຕ້ອງ ແລະ ຄົບຖ້ວນ;

2.5 ຕັ້ງໜ້າປະກອບສ່ວນໃນກິດຈະກຳຕ່າງໆ ທັງໃນ ແລະ ນອກໂຮງຮຽນທີ່ຄູ ແລະ ໂຮງຮຽນຈັດຂຶ້ນຢ່າງມີປະສິດທິຜົນ.

3) **ຜົນການຮຽນຂອງນັກຮຽນ.**

3.1 ຜົນການຮຽນປະຈຳເດືອນ ແລະ ພາກຮຽນແຕ່ລະວິຊາບໍ່ໃຫ້ຫຼຸດຄາດໝາຍ ແລະໄດ້ຄະແນນ 7 ຂຶ້ນໄປ ແລະ ມີຄະແນນນັກຮຽນເກັ່ງສະເລ່ຍທັງໝົດ 70% ຂອງນັກຮຽນທັງໝົດ.

2. **ຕ້ານປະກົດການຫຍໍ້ທໍ້ໃນໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາ ການຕ້ານປະກົດການຫຍໍ້ທໍ້ ສະແດງອອກໃນດ້ານຕ່າງໆດັ່ງນີ້:**

1) ດ້ານນິຕິກຳ

1.1 ມີລະບຽບການຄຸ້ມຄອງໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາ ;

1.2 ມີລະບຽບການຄຸ້ມຄອງຫໍພັກ ແລະ ການປ້ອງກັນຄວາມສະຫງົບ;

1.3 ມີການແຕ່ງຕັ້ງຄະນະຮັບຜິດຊອບວຽກງານແຕ່ລະດ້ານ;

1.4 ສ້າງແຜນການເຄື່ອນໄຫວແຕ່ລະໄລຍະ;

1.5 ຈັດການຝຶກອົບຮົມ ຫຼືເຜີຍແຜ່ແຜນການເຄື່ອນໄຫວລະບຽບການຕ່າງໆ;

1.6 ສະຫຼູບຜົນການຈັດຕັ້ງປະຕິບັດແຕ່ລະໄລຍະ, ຍ້ອງຍໍຊົມເຊີຍ ແລະ ລາຍງານຂັ້ນເທິງຂອງຕົນ.

2) **ການສະກັດກັ້ນ ແລະ ຕ້ານການຄ້າຂາຍການເສບສິ່ງເສບຕິດ**

2.1 ແຕ່ງຕັ້ງຄະນະຮັບຜິດຊອບຕ້ານສິ່ງເສບຕິດ ຂັ້ນໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາ;

2.2 ໂຄສະນາເຜີຍແຜ່ຜົນຮ້າຍສິ່ງເສບຕິດ;

2.3 ສ້າງບັນດາກິດຈະກຳຕ້ານສິ່ງເສບຕິດ;

2.4 ສ້າງເຄືອຄ່າຍເພື່ອຕິດຕາມ, ກວດກາທຸກໄລຍະແລະບ່ອນມີຄວາມສ່ຽງ;

2.5 ສຶກສາອົບຮົມຕໍ່ຜູ້ເສບສິ່ງເສບຕິດ ແລະ ລົງໂທດຕໍ່ຜູ້ຄ້າຂາຍສິ່ງເສບ

ຕິດຢ່າງເໝາະສົມ;

2.6 ໃຫ້ການຍ້ອງຍໍ, ລາງວັນແກ່ຜູ້ລາຍງານ ແລະ ຈັບໄດ້ສິ່ງເສບຕິດ;

**3) ການສະກັດກັ້ນຄວາມບໍ່ໂປ່ງໃສ**

ກ. ດ້ານການຮຽນການສອນ

1.1 ຜູ້ຮຽນ ແລະ ຄູມີຄວາມນັບຖືຮັກແພງກັນ

1.2 ບໍ່ມີການແບ່ງແຍກເພດ, ເຜົ່າຊົນ ແລະ ຊັ້ນຄົນ

1.3 ຄູໃຫ້ຄະແນນແກ່ຜູ້ຮຽນດ້ວຍຄວາມຍຸຕິທຳຕາມຄວາມສາມາດຂອງຜູ້ຮຽນ

**ຂ. ຕ້ານຄວາມບໍ່ໂປ່ງໃສໃນການສອບເສັງເຂົ້າຮຽນພາຍໃນ ແລະ ຕ່າງປະເທດ**

1.1 ນັກສອບເສັງທຸກຄົນຕ້ອງປະຕິບັດຕາມລະບຽບການສອບເສັງຢ່າງເຂັ້ມງວດ

1.2 ນັກສອບເສັງທຸກຄົນຕ້ອງໄດ້ຮັບຄວາມເປັນທຳຕໍ່ຜົນການສອບເສັງ

1.3 ຕ້ອງເຄົາລົບນັບຖືຜົນຂອງການສອບເສັງຈາກກຳມະການຕັດສິນ

**ຄ. ຕ້ານຄວາມບໍ່ໂປ່ງໃສໃນການປອມແປງເອກະສານ**

1.1 ຕ້ານການປ້ອມແປງເອກະສານການເຂົ້າຮຽນທຸກລະດັບຊັ້ນຮຽນ;

1.2 ຕ້ານການປອມແປງໃບຄະແນນ ແລະໃບປະກາດທຸກລະດັບຊັ້ນຮຽນ;

1.3 ຕ້ານການອອກເອກະສານຢັ້ງຢືນທາງດ້ານວິຊາການທີ່ບໍ່ຖືກຕ້ອງ;

1.4 ຕ້ານທຸກກໍລະນີທີ່ເປັນການໃຫ້ສິນບົນ.

**3. ສ້າງສະພາບແວດລ້ອມທີ່ດີ ໃນໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາ ສ້າງສະພາບແວດລ້ອມທີ່ດີ ສະແດງອອກໃນດ້ານຕ່າງໆ ດັ່ງນີ້:**

**1) ອຳນວຍຄວາມສະດວກໃຫ້ແກ່ ການຮຽນ-ການສອນ**

1.1 ສະຖານທີ່ເໝາະສົມແກ່ການຮຽນການ-ສອນແຕ່ລະຊັ້ນຮຽນ;

1.2 ມີອຸປະກອນທີ່ຈຳເປັນເພື່ອສະໜອງແກ່ການຮຽນການສອນ;
1.3 ມີສິ່ງທີ່ເອື້ອອຳນວຍໃຫ້ແກ່ການຈັດກິດຈະກຳນອກຫຼັກສູດ;
1.4 ບໍ່ມີການວິນແຊວລົບກວນຈາກຂ້າງນອກ.

**2) ເຮັດໃຫ້ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາ ມີຄວາມສະອາດ**

2.1 ຫ້ອງຮຽນ ແລະ ບໍລິເວນໂຮງຮຽນບໍ່ມີສິ່ງເສດເຫຼືອເປື້ອນເປິະຊະຊາຍ;
2.2 ມີບ່ອນກຳນົດຖິ້ມຂີ້ເຫຍື້ອເປັນລະບຽບ;
2.3 ມີຫ້ອງນ້ຳສະອາດ

**3) ເຮັດໃຫ້ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາ ມີຄວາມສວຍງາມ**

3.1 ໂຮງຮຽນມີຮົ້ວອ້ອມຮອບ ແລະ ມີປ້າຍບອກຊື່ໂຮງຮຽນຢູ່ປະຕູໂຂງທາງເຂົ້າ;
3.2 ມີຫຼັກທຸງ ແລະ ມີເດີ່ນທີ່ເໝາະສົມສາມາດ ປະຕິບັດກິດຈະກຳນອກຫຼັກສູດ;
3.3 ຫ້ອງການຄູ ແລະ ຫ້ອງຮຽນມີການປະດັບ ປະດາຢ່າງເໝາະສົມແລະສະອາດງາມຕາ.

**4) ເຮັດໃຫ້ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາ ເປັນສີຂຽວ**

4.1 ມີຮົ້ວອ້ອມໂຮງຮຽນ, ມີຕົ້ນໄມ້ປະດັບຫຼືຕົ້ນໄມ້ກິນໝາກ;
4.2 ບໍລິເວນໃນໂຮງຮຽນໄດ້ຈັດສັນໃຫ້ມີຕົ້ນໄມ້ໃຫ້ຮົ່ມ ເພື່ອອຳນວຍຄວາມສະດວກເວລານັກຮຽນປະ ຕິບັດກິດຈະກຳນອກຫຼັກສູດ;
4.3 ມີສວນດອກໄມ້ ຫຼື ສວນຄົວສະເພາະ ເພື່ອເຮັດໃຫ້ນັກຮຽນໄດ້ຮຽນຮູ້ການປູກ, ແລະ ການເຕີບໂຕຂອງຊີວະນາໆພັນ ແລະ ມີການອອກແຮງງານ.

## III. ວິທີການຈັດຕັ້ງປະຕິບັດການແຂ່ງຂັນ

1. ໃຫ້ແຕ່ລະພາກສ່ວນ ໂດຍສະເພາະບັນດາ ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ແລະ ກິລາແຫ່ງຕ່າງໆ ເຜີຍແຜ່ ແລະ ແນະນຳ ໃນການຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ໃຫ້ທົ່ວເຖິງ;
2. ແຕ່ລະພາກສ່ວນຕ້ອງຕິດຕາມ, ຊຸກຍູ້ ແລະ ສົ່ງເສີມ ບັນດາຫົວໜ່ວຍ ແລະ ບຸກຄົນທີ່ຂຶ້ນກັບຕົນໃຫ້ຈັດຕັ້ງປະຕິບັດ 3 ຂໍ້ແຂ່ງຂັນຂອງຂະແໜງການສຶກສາ ແລະ ກິລາ ເພື່ອໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ;
3. ໃຫ້ຫ້ອງການ, ກົມ, ພາກສ່ວນເທົ່າກົມ, ສະຖາບັນ, ສູນ ແລະ ໂຮງຮຽນແຫ່ງຕ່າງໆ, ພະແນກສຶກສາທິການແລະ ກິລາແຂວງ, ນະຄອນຫຼວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ ຈົ່ງຈັດຕັ້ງປະຕິບັດບົດແນະນຳສະບັບນີ້ຕາມໜ້າທີ່ຂອງໃຜລາວ.

**ບົດແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.**

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ,

ດຣ.ພັນຄຳ ວິພາວັນ

ບ່ອນສົ່ງ:

- ຫ້ອງການກະຊວງ 1 ສະບັບ
- ກົມ ແລະທຽບເທົ່າກົມບ່ອນລະ 1 ສະບັບ
- ມະຫາວິທະຍາໄລແຫ່ງລະ 1 ສະບັບ
- ສະຖາບັນ, ສູນ ບ່ອນລະ 1 ສະບັບ
- ໂຮງຮຽນ, ວິສາຫະກິດ,
- ອ້ອມຂ້າງກະຊວງ ບ່ອນລະ 1 ສະບັບ
- ພະແນກສຶກສາທິການ ແລະ ກິລາ
- ແຂວງ,ນະຄອນຫຼວງ ບ່ອນລະ 1 ສະບັບ
- ສຳເນົາ 2 ສະບັບ